ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ 053/ສອສ.ອທອ

ວັນທີ 1/3/17

# ແຈ້ງການ

ເຖິງ: ບັນດາພະແນກ, ສາຂາ ອທອ ປະຈຳແຂວງ ແລະ ສະມາຊິກ ສອສ ທົ່ວປະເທດ.

ເລື່ອງ: ການຈ່າຍເງິນປັນຜົນໃຫ້ແກ່ສະມາຊິກປະຈຳງວດ 6 ເດືອນທ້າຍປີ 2016.

- ອີງຕາມກົດລະບຽບພາຍໃນຂອງສະຫະກອນ ອອມຊັບ-ສິນເຊື່ອ ອທອ ສະບັບເລກທີ: 005/ສອສ, ລົງວັນທີ 28/01/2013
- ອີງຕາມ ໃບແຈ້ງການຂອງກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ເລກທີ 554/ທຫລ, ລົງວັນທີ 13/12/2016 ວ່າດ້ວຍການຢັ້ງຢືນຄວາມຖືກຕ້ອງການບັນຊີກ່ອນການປັນຜົນ.
- ອີງຕາມ ບົດບັນທຶກກອງປະຊຸມ ລະຫວ່າງ ສະຫະກອນ ອອມຊັບ-ສິນເຊື່ອ ອທອ ແລະ ຄະນະກວດກາກັບທີ່, ກົມຄຸ້ມຄອງສະຖາບັນການເງິນ ເລກທີ 051/ສອສ.ອທອ, ລົງວັນທີ 01/03/2017, ເຫັນດີອະນຸມັດໃຫ້ ສອສ ຈ່າຍເງິນປັນຜົນໃຫ້ແກ່ສະມາຊິກປະຈຳງວດ 6 ເດືອນທ້າຍປີ 2016 ກ່ອນພາຍຫລັງສຳເລັດການກວດກາກັບທີ່.

ຜູ້ອຳນວຍການ ສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກ, ສາຂາ ອທອ ປະຈຳແຂວງ ເພື່ອແຈ້ງຕໍ່ສະມາຊິກ ສອສ ທຸກທ່ານຊາບ ການຈ່າຍເງິນປັນຜົນປະຈຳງວດ 6 ເດືອນທ້າຍປີ 2016 ສອສ ຈະປະຕິບັດການຈ່າຍເງິນປັນຜົນໃນອັດຕາ 660ກີບ ຕໍ່ ຮຸ້ນ. ກຳນົດການຈ່າຍເງິນປັນຜົນ ເລີ້ມແຕ່ວັນທີ 1 -2 ມີນາ 2017. ສະມາຊິກສາມາດກວດກາເງິນຢູ່ໃນບັນຊີທະນາຄານຂອງຕົນໄດ້ ຊຶ່ງປະກອບມີ ການຄ້າຕ່າງປະເທດລາວ, ພັດທະນາລາວ ແລະ ລາວວຽດ. ລາຍລະອຽດໃຫ້ ເຂົ້າເບິ່ງຢູ່ໃນເວບໄຊ ສອສ.

ສະນັ້ນ, ຈຶ່ງແຈ້ງມາຍັງສະມາຊິກ ສອສ ທຸກທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຮຜູ້ອຳນວຍການ ສອສ

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນອອມຊັບ-ສິນເຊື່ອ

ແສງດາລັດ ກັດຕິຍະສັກ